# ພັບສາຍສານໃຈ



ໂຮມເລື່ອງສັ້ນຂຽນໂດຍນັກຮຽນແລະນາຍຄູ

ມັດທະຍົມປາຍ ແຂວງອຸດົມໄຊ

# ພັນສາຍສານໃຈ

7/07/2015

ນະຄອນຫຼວງວຽງຈັນ, 2015

# ພັນສາຍສາຍໃຈ

**ຂຽນໂດຍ:** ທ. ເສົາເນກອາລຸນ ສອນດາລາ, ທ. ຕູ້ ຊາປໍເຢຍ, ນ. ຄຳເຟ ແສນວັນນະຄຳ, ນ. ໄຊສຸລາ ໄຊສົມແສງ, ທ. ບຸນມີ ດວງມີໄຊ, ນ. ສຸລິພອນ ກຸລາເດດ, ທ. ສີລິກອນ ສີລິພອນ, ທ. ບຸນທາຍ ອອນສະຫວັນ, ທ. ທອງຈັນ ໄຊມະນີ, ນ. ນ້ອຍສຸດາ ລັດຕະນະວົງ, ດອກໄມ້ປ່າ, ນ. ສຸພານິດ ສີລິປັນຍາ, ນ. ໄວສອນ ສີວິໄລ, ນ. ສຸພິນ ປັນຍາສິດ, ທ. ບຸນຈັນ ອິນຕະນະວົງ, ນ. ບົວແກ້ວ ມີເຊີ, ດອກຫຍ້າ, ທ. ສຸລິນດາ ມະນີພອນ, ທ. ບຸນສວຍ ມາຍວົງເດືອນ, ນ. ສຸວັນນີ ແກ້ວອຳພອນ, ທ. ແມັກ ຜາມະນີ, ນ. ບຸນເພັງ ອິນທະວົງ, ນ. ບົວສະຫວັນ ຕຸລະພົມ, ນ. ຄອນມະນີ ໄຊນະຜົນ ແລະ ນ. ຄອນມະນີ ໄຊຍະສອນ

**ຈັດໜ້າໂດຍ:** ສຸພັດສອນ ພົງພິຈິດ

**ຮູບປະກອບເລື່ອງໂດຍ:** ບຸນທັນ ພົງພິຈິດ, ຄຳຮັກ ແກ້ວບຸນທອນ, ທຸມພັນ ລັງວົງແສງ, ມະນີວັນ ເພັດສຸພັນ, ເຊີຍັງແລະອົງການບ້ານຈຸດສຸມສາກົນ

**ບັນນາທິການໂດຍ:** ບຸນທັນ ພົງພິຈິດ, ຄຳຮັກ ແກ້ວບຸນທອນແລະ ທຸມພັນ ລັງວົງແສງ

**ຈັດພິມໂດຍ:** ສູນຝຶກອົບຮົມແລະໃຫ້ຄຳປຶກສາການພັດທະນາຊຸມຊົນ ແລະກຸ່ມນັກຂຽນສ້າງສັນ

**ພິມທີ່:** ໂຮງພິມ ຢູນິພຣິນ ຈຳກັດ

**ຈຳນວນພິມ:** 500 ຫົວ, ພິມຄັ້ງທີ I

808.031-- dc21

ISBN 978-9932-405-32-9

ເລກທະບຽນພິມຈຳໜ່າຍ: 082 /ພຈ13052015

# ຄຳນຳ

ປະຊາຊົນບັນດາເຜົ່າຢູ່ໃນປະເທດລາວ ສ່ວນຫຼາຍອາໄສຢູ່ເຂດຊົນນະບົດ ໂດຍສະເພາະແມ່ນເຂດເນີນສູງແລະເຂດພູດອຍຊຶ່ງຢູ່ຫ່າງໄກສອກຫຼີກຈາກຕົວເມືອງໃຫຍ່. ເຂົາເຈົ້າເຫຼົ່ານີ້ມີວັດທະນະທຳ ແລະການດຳລົງຊີວິດທີ່ຜູກພັນກັບທຳມະຊາດ ຈົນກາຍເປັນຄວາມເຊື່ອ ແລະພູມປັນຍາສືບທອດກັນມາໄດ້ຫຼາຍເຊັ່ນຄົນ ບໍ່ວ່າຈະເປັນການອະນຸລັກຕົ້ນໄມ້ສັກສິດ, ປົກປັກຮັກສາແຫຼ່ງຢາສະໝຸນໄພ, ນຳໃຊ້ເຄື່ອງປ່າຂອງດົງແບບພໍລ້ຽງຊີວິດ, ການເຮັດໄຮ່ເຮັດສວນແບບທຳມະຊາດ ຕະຫຼອດຮອດການຫາສັດນ້ຳແບບງ່າຍດາຍ ພໍເປັນອາຫານລ້ຽງຄອບຄົວໄປແຕ່ລະມື້ແຕ່ລະວັນ.

ຕາມການສຶກສາວິໄຈຂອງນັກວິຊາການຫຼາຍຄົນ ສະແດງໃຫ້ຮູ້ວ່າ ຄວາມເຊື່ອ, ວັດທະນະທຳແລະປະເພນີຊົນເຜົ່າຢູ່ເຂດຊົນນະບົດ ໄດ້ຊ່ວຍປົກປ້ອງສະພາບແວດລ້ອມ ແລະຊັບພະຍາກອນທຳມະຊາດຂອງໂລກເອົາໄວ້ໄດ້ໃນລະດັບໜຶ່ງ ໃນຂະນະທີ່ປະເທດຕ່າງໆ ແຂ່ງຂັນກັນສ້າງຄວາມເຕີບໂຕທາງດ້ານເສດຖະກິດຂອງຕົນເອງ ດ້ວຍການນຳໃຊ້ຊັບພະຍາກອນເຫຼົ່ານີ້ເກີນຄວາມຈຳເປັນ ຈົນກໍ່ໃຫ້ເກີດຜົນກະທົບຮ້າຍແຮງຕໍ່ມວນມະນຸດເຊັ່ນ: ໂລກຮ້ອນ, ນ້ຳແລະອາກາດເປັນມົນລະພິດ ຊຶ່ງພວກເຮົາກຳລັງຜະເຊີນຢູ່ໃນຂະນະນີ້.

ນັກວິທະຍາສາດລົງຄວາມເຫັນວ່າ ການເສື່ອມໂຊມຂອງສິ່ງແວດລ້ອມ ແລະການປ່ຽນແປງສະພາບດິນຟ້າອາກາດເກີດຂຶ້ນຍ້ອນການປ່ອຍຄວັນພິດຈາກໂຮງຈັກໂຮງງານແລະລົດຍົນຕາມ

ທ້ອງຖະໜົນ, ການຕັດຕົ້ນໄມ້ໃຫຍ່ອາຍຸຫຼາຍຮ້ອຍປີຢູ່ໃນພາກສ່ວນຕ່າງໆຂອງໂລກ ເພາະການເຮັດແບບນີ້ເປັນການປ່ອຍອາຍພິດຂຶ້ນໄປຊັ້ນບັນຍາກາດຂອງໂລກ. ນອກຈາກນັ້ນ ການຜະລິດກະສິກຳເພື່ອການຄ້າ ດ້ວຍການບຸກເບີກເນື້ອທີ່ດິນຂະໜາດໃຫຍ່ ໄດ້ກໍ່ມົນລະພິດຕໍ່ສະພາບແວດລ້ອມຫຼາຍທີ່ສຸດ ຍ້ອນການໃຊ້ປຸ໋ຍເຄມີເພື່ອເລັ່ງໃຫ້ພືດໃຫຍ່ໄວ, ການໃຊ້ຢາຂ້າຫຍ້າ ແລະຢາຂ້າແມງໄມ້ ໄດ້ເຮັດໃຫ້ຫ້ວຍນ້ຳລຳເຊເປັນພິດ ຈົນເຮັດໃຫ້ປະຊາຊົນເຈັບເປັນແລະສູນເສຍຊີວິດ.

ໃນຂະນະທີ່ການພັດທະນາທາງດ້ານເສດຖະກິດຂອງໂລກກຳລັງດຳເນີນໄປຢ່າງໄວວາ ແລະສປປ ລາວ ກໍຈະເຂົ້າເປັນສະມາຊິກເສດຖະກິດປະຊາຄົມອາຊຽນໃນທ້າຍປີ 2015 ນີ້ ສິ່ງທີ່ຕາມມາກໍຄືຈະຕ້ອງມີການລົງທຶນດ້ານກະສິກຳ, ອຸດສາຫະກຳ, ການທ່ອງທ່ຽວແລະອື່ນໆຢ່າງຫຼວງຫຼາຍ ຊຶ່ງຈຳຕ້ອງມີດິນ, ແຫຼ່ງນ້ຳແລະຊັບພະຍາກອນທຳມະຊາດມາຮອງຮັບການຂະຫຍາຍຕົວຂອງສິ່ງເຫຼົ່ານີ້. ສະນັ້ນ ການເຮັດໃຫ້ພາກສ່ວນທີ່ກ່ຽວຂ້ອງ ແລະປະຊາຊົນບັນດາເຜົ່າຮັບຮູ້ ແລະເຂົ້າໃຈບັນຫາທີ່ກຳລັງຜະເຊີນຢູ່ ເປັນການສ້າງພູມຄຸ້ມກັນໃຫ້ແກ່ຊົນເຜົ່າເຫຼົ່ານີ້ ເພື່ອໃຫ້ເຂົາເຈົ້າມີຄວາມພ້ອມທີ່ຈະຮັບມືກັບສິ່ງທ້າທາຍ ຊຶ່ງຈະເກີດຂຶ້ນໃນອະນາຄົດຂ້າງໜ້າ.

"ພັນສາຍສານໃຈ" ແມ່ນປຶ້ມໂຮມເລື່ອງສັ້ນ ຂຽນໂດຍນັກຮຽນມັດທະຍົມປາຍຢູ່ແຂວງອຸດົມໄຊ. ເລື່ອງຕ່າງໆສະທ້ອນໃຫ້ເຫັນແງ່ມູມອັນງົດງາມທາງວັດທະນະທຳ, ຮີດຄອງປະເພນີ, ຄວາມເຊື່ອແລະການດຳລົງຊີວິດຂອງປະຊາຊົນບັນດາເຜົ່າຢູ່ທາງພາກເໜືອຂອງປະເທດລາວ. ປັດຈຸບັນຊົນເຜົ່າເຫຼົ່ານີ້ກຳລັງບຸກບືນ

ສ້າງເສດຖະກິດຂອງຕົນເອງ ຮຽນຮູ້ທີ່ຈະດຳເນີນຊີວິດໄປຕາມທິດທາງນະໂຍບາຍຂອງພັກແລະລັດ ທັງເຮັດໃຫ້ການທຳມາຫາກິນຂອງພວກເຂົາເຈົ້າສອດຄ່ອງກັບການພັດທະນາທາງດ້ານເສດຖະກິດຂອງຊາດຕາມກະແສໂລກາພິວັດ. ໃນຂະນະດຽວກັນເຂົາເຈົ້າກໍພະຍາຍາມຮັກສາເອກະລັກຂອງຕົນເອງ ດ້ວຍການປົກປັກຮັກຊັບພະຍາກອນທຳມະຊາດ ແລະສ້າງສະພາບແວດລ້ອມທີ່ປອດໃສ ເພື່ອໃຫ້ຊົນເຜົ່າຂອງຕົນເອງສາມາດດຳລົງຊີວິດຢູ່ກັບປ່າດົງພົງໄພແລະຫ້ວຍນ້ຳລຳທານ ຊຶ່ງເປັນສິ່ງທີ່ເຂົາເຈົ້າຕ້ອງເພິ່ງພາອາໄສຢູ່ໃນຂົງເຂດນີ້ຕໍ່ໄປ ຈົນຮອດເຊັ່ນລູກເຊັ່ນຫຼານ.

ຄະນະຈັດພິມ

# ຄຳນຳຂອງສຳນັກພິມນັກປະພັນລາວ

ຄົນລາວເຮົາ ມີຫຼາຍເຜົ່າຊົນ ຊຶ່ງດຳລົງຊີວິດຢູ່ໃນແຕ່ລະທ້ອງຖິ່ນດິນແດນ ທີ່ມີສະພາບແວດລ້ອມທາງທຳມະຊາດແລະວັດທະນະທຳ-ສັງຄົມແຕກຕ່າງກັນ. ແນ່ນອນວ່າ ທຳມະຊາດ ວັດທະນະທຳແລະສັງຄົມ ຢູ່ບ່ອນໃດກໍ່ສົ່ງຜົນກະທົບຕໍ່ແນວຄິດຈິດໃຈຂອງຄົນຢູ່ບ່ອນນັ້ນ. ຜູ້ຄົນໃນທ້ອງຖິ່ນກໍຍ່ອມຮູ້ດີເຖິງຄຸນຄ່າຂອງດິນຟ້າອາກາດ ໄຮ່ນາຕາກ້າ ພູຜາປ່າດົງ ຫ້ວຍນ້ຳລຳເຊ ເຄື່ອງປ່າຂອງດົງ ເຄື່ອງນຸ່ງຂອງຖື ສີໄມ້ລາຍມື ອາຫານການກິນ ຮີດຄອງປະເພນີ ພິທີກຳແລະອື່ນໆ ໃນຖິ່ນທີ່ເຂົາເຈົ້າດຳລົງຊີວິດຢູ່ ຫຼືໃນເຜົ່າພັນຂອງເຂົາເຈົ້າ ແລະກໍຮູ້ດີວ່າມາເຖິງມື້ນີ້ຕົນເອງ ແລະເຜົ່າພັນກຳລັງຜະເຊີນກັບການທ້າທາຍອັນໃຫຍ່ຫຼວງ ທີ່ມາພ້ອມກັບຄຳວ່າ "ການພັດທະນາເສດຖະກິດ-ສັງຄົມແຫ່ງຊາດ" ແລະຄຳວ່າ "ໂລກາພິວັດ".

ການທີ່ສູນຝຶກອົບຮົມແລະໃຫ້ຄຳປຶກສາການພັດທະນາຊຸມຊົນ ແຂວງອຸດົມໄຊ ໄດ້ສ້າງເງື່ອນໄຂໃຫ້ນັກຮຽນຊັ້ນມັດທະຍົມໄດ້ຂຽນເລື່ອງສັ້ນ ທີ່ມີເນື້ອໃນກ່ຽວກັບວັດທະນະທຳຊົນເຜົ່າແລະບັນຫາສະພາບແວດລ້ອມໃນແຂວງອຸດົມໄຊນີ້ ບໍ່ພຽງແຕ່ເຮັດໃຫ້ນັກຮຽນໄດ້ຮັບການຝຶກຝົນດ້ານການປະພັນວັນນະຄະດີ ແຕ່ຍັງເຮັດໃຫ້ເຂົາເຈົ້າມີຈິດສຳນຶກ ແລະສືບຮູ້ເຖິງຄຸນຄ່າຂອງທຳມະຊາດ ແລະວັດທະນະທຳອັນດີງາມຂອງເຜົ່າຊົນອີກດ້ວຍ. ແຕ່ລະເລື່ອງທີ່ໄດ້ມາ ກໍສ່ອງແສງໃຫ້ຜູ້ອ່ານໄດ້ເຫັນເຖິງສະພາບຄວາມເປັນໄປໃນທ້ອງຖິ່ນ ຄວາມຮູ້ສຶກນຶກຄິດຂອງຄົນຮຸ່ນໜຸ່ມແຂວງອຸດົມໄຊ ຕໍ່ສະພາບແວດລ້ອມທຳມະຊາດແລະ

ວັດທະນະທຳ ສັງຄົມຂອງເຜົ່າອີກດ້ວຍ.

ການຈັດພິມປຶ້ມນີ້ ນັບເປັນການສົ່ງເສີມນັກຂຽນວັນນະກຳຮຸ່ນໃໝ່, ສົ່ງເສີມສິດເປັນເຈົ້າປະເທດຊາດ, ສິດເປັນເຈົ້າຕົນເອງ, ຄວາມເອກອ້າງທະນົງໃຈຂອງນັກຮຽນນັກສຶກສາໃນຊົນນະບົດ ທັງເປັນການຮ່ວມປົກປັກຮັກສາສິ່ງແວດລ້ອມ ແລະສືບທອດເສີມຂະຫຍາຍຄຸນຄ່າອັນດີງາມຂອງວັດທະນະທຳເຜົ່າອີກດ້ວຍ.

ຜູ້ອຳນວຍການ - ຫົວໜ້າບັນນາທິການ
ສຳນັກພິມນັກປະພັນລາວ
ທັງເທີນ ຊຸນພິທັກ

# ສາລະບານ


ຄຳນຳ ........................................ iii

1. ກ້ຽວໄມ້ໄດ້ເງິນ ........................................ 1
*ທ. ເສົາເມກອາລຸນ ສອນດາລາ*

2. ຂອງເດີມ ........................................ 7
*ທ. ຕູ້ ຊາປໍເປຍ*

3. ເຂົ້າລືມຜົວ ........................................ 13
*ນ. ຄ່າເຟ ແສນວັນນະຄຳ*

4. ຕົ້ນໄມ້ຊີວິດ ........................................ 21
*ນ. ໄຊສຸລາ ໄຊສົມແສງ*

5. ຜູ້ສືບທອດ ........................................ 27
*ທ. ບຸນມີ ດວງມີໄຊ*

6. ຫຍ້າຮາກດຽວ ........................................ 35
*ນ. ສຸລິພອນ ກຸລາເດດ*

7. ສິ່ງແລກປ່ຽນ ........................................ 41
*ທ. ສິລິກອນ ສິລິພອນ*

8. ສັນຍາໃຈ ........................................ 47
*ທ. ບຸນທາຍ ອອນສະຫວັນ*

9. ຄວາມຫວັງຍັງມີ ........................................ 55
*ທ. ທອງຈັນ ໄຊມະນີ*

10. ປ່າໄມ້ຂອງບ້ານ ........................................ 61
*ນ. ນ້ອຍສຸດາ ລັດຕະນະວົງ*


24 / VII ຮ້ານຈຳໜ່າຍ

11. ພັນທະທົວໃຈ ....................................67
*ດອກໄມ້ປ່າ*

12. ສົ້ມໝູ...............................................77
*ນ. ສຸພານິດ ສິລິປັນຍາ*

13. ພັນສາຍສານໃຈ......................................85
*ນ. ໄວສອນ ສີວິໄລ*

14. ຄືນຖິ່ນ ...............................................95
*ນ. ສຸພິນ ປັນຍາສິດ*

15. ຜີບ້ານ...............................................101
*ທ. ບຸນຈັນ ອິນຕະນະວົງ*

16. ສາຍລົມແສງແດດຢູ່ເຈື້ຍພູ............................107
*ນ. ບົວແກ້ວ ມີເຊີ*

17. ຄວາມຫວັງທີ່ປາຍຟ້າ .................................111
*ດອກຫຍ້າ*

18. ພາບທີ່ຫາຍໄປ.......................................121
*ທ. ສຸລິນດາ ມະນີພອນ*

19. ສິ່ງທີ່ພໍ່ເລືອກ ......................................127
*ທ. ບຸນສວຍ ມາຍວົງເດືອນ*

20. ປາຜັ່ນ...............................................133
*ນ. ສຸວັນນີ ແກ້ວອຳພອນ*

21. ລົມຫາຍໃຈ .........................................139
*ທ. ແມັກ ຜານະນີ*

22. ບົດຮຽນທີ່ແສນເຈັບປວດ....................................145
*ນ. ບຸນເພັງ ອິນທະວົງ*

23. ຫວານໆສ້າງລາຍຮັບ......................................151
*ນ. ບົວສະຫວັນ ຕຸລະພົມ*

24. ຄໍາສັນຍາ .....................................................155
*ນ. ຄອນມະນີ ໄຊນະພົນ*

25. ຄິດບໍ່ເຖິງ .....................................................163
*ນ. ຄອນມະນີ ໄຊຍະສອນ*



# ກ້ຽວໄມ້ໄດ້ເງິນ

*ທ. ເສົາເມກອາລຸນ ສອນດາລາ, ມ.ສ ແຂວງອຸດົມໄຊ*

ໝອກທີ່ປົກຄຸມທົ່ວທ້ອງຟ້າຄ່ອຍຈາງຫາຍໄປ ເຫຼືອໄວ້ພຽງແຕ່ກ້ອນສີຂາວທີ່ຍັງຄົງຄ້າງຕາມຈອມພູ ແລະຮ່ອມຫ້ວຍ ກາຍເປັນທະເລໝອກອັນສວຍງາມ ປະສານກັບແສງຂອງດວງອາທິດສອດສ່ອງລອດຜ່ານຕົ້ນໄມ້ນ້ອຍໃຫຍ່ທີ່ສະລັບຊັບຊ້ອນກັນກັບເຄືອໄມ້ທີ່ຄົດໂຄ້ງ. ສຽງນົກກາຮ້ອງຫາຄູ່ດັງຈີ່ກຈອກຈໍແຈ ເປັນສັນຍານບອກເຖິງຄວາມອຸດົມສົມບູນຂອງຜືນປ່າແຫ່ງໜຶ່ງໃນຂົງເຂດຊົນນະບົດ ຊາຍໜຸ່ມຮູບຮ່າງຈ່ອຍສູງ ຜິວດຳຄ້ຳ ຍ່າງເຂົ້າປ່າແຫ່ງນັ້ນດ້ວຍຄວາມມຸ່ງໝັ້ນ.

"ເກື໊ກໆ....ໆ....ໆ ແອ໊ດໆ....ໂຄ່ມ! ເຢ້! ໄດ້ແລ້ວ" ສຽງດັງມາຈາກຮ່ອມຫ້ວຍທາງເບື້ອງຊ້າຍ ໃກ້ກັບເສັ້ນທາງທີ່ຄຳປານກຳລັງຍ່າງຜ່ານມາ. ຫຼັງຈາກນັ້ນ ຄຳປານກໍຍ່າງມຸ່ງໜ້າໄປຫາສຽງນັ້ນ. ພໍມາເຖິງ ລາວຕ້ອງຕົກຕະລຶງ ເມື່ອເຫັນຊາວບ້ານກຳລັງຕັດເຄືອຫວາຍລົງເດຍລະດາດ ເພື່ອເກັບເອົາໝາກຂອງມັນ.

"ແມ່ນພວກເຈົ້າເຮັດຫຍັງແບບນີ້?" ຄຳປານຖາມດ້ວຍຄວາມຕົກໃຈ.

"ໂອ້! ເຈົ້າໄປຢູ່ໃສມາ ບໍ່ຮູ້ບໍ ເຂົາເກັບໄດ້ສອງສາມມື້ແລ້ວເດ້" ຊາວບ້ານຄົນໜຶ່ງເວົ້າແບບບໍ່ຮູ້ຮ້ອນຮູ້ໜາວ.

"ເນ້ງ...ຢູ່ເທິງຫັ້ນກໍມີ" ຊາວບ້ານຄົນໜຶ່ງເອົາມືຊີ້ໄປໃສ່.

"ປ້ຳເລີຍ ມັນສູງ ຂຶ້ນເອົາຢ້ານຊິຕົກ" ຊາຍຄົນໜຶ່ງເວົ້າ ທັງຈັບພ້າອີໂຕ້ເຂົ້າໄປຫາເຄືອຫວາຍ.

"ໂອ້! ພວກເຈົ້າເຮັດແບບນີ້ຈັກໜ້ອຍກໍຈະດັບໝົດແຫຼະ!"

ຄຳປານກ່າວຕັກເຕືອນ.

"ບໍ່ໝົດດອກ ບ້ານເຮົາມີບັກຫຼາຍໆ" ຊາວບ້ານຄົນໜຶ່ງເວົ້າໂດຍບໍ່ສົນໃຈຄຳເວົ້າຂອງຄຳປານ. ຄຳປານໄດ້ແຕ່ກົ້ມໜ້າຍ່າງໜີດ້ວຍທ່າທາງຜິດຫວັງ.

ຄຳປານແມ່ນຜູ້ໜຶ່ງທີ່ສັງກັດຢູ່ໃນກຸ່ມຫັດຖະກຳນ້ອຍໆຂອງບ້ານ ທັງເປັນວິຊາການ ແນະນຳວິທີການຜະລິດຢູ່ໃນກຸ່ມ.

ຫຼາຍວັນຜ່ານໄປ ຫວາຍທີ່ເຄີຍອຸດົມສົມບູນກໍຄ່ອຍໆເລືອນຫາຍໄປ ຍັງເຫຼືອພຽງແຕ່ຕົ້ນນ້ອຍໆທີ່ກຽມພ້ອມຈະປົ່ງຂຶ້ນທົດແທນ ຊຶ່ງມັນໄດ້ສົ່ງຜົນກະທົບຢ່າງມະຫາສານໃຫ້ກັບກຸ່ມຫັດຖະກຳດັ່ງກ່າວ. ມື້ຕໍ່ມາຄຳປານໄດ້ເຂົ້າໄປປຶກສາຫາລືກັບນາຍບ້ານ.

"ສະບາຍດີນາຍບ້ານ" ຄຳປານກ່າວທັກທາຍ.

"ສະບາຍດີ ເຂົ້າມາໃນກ່ອນແມ່" ນາຍບ້ານເຊື້ອເຊີນຄຳປານ.

"ດຽວນີ້ເຄືອຫວາຍເຂດບ້ານເຮົາ ຊາວບ້ານຕັດໝົດແລ້ວເດ້ແລ້ວເຮົາຊິເອົາຫວາຍຢູ່ໃສມາຜະລິດ" ຄຳປານເວົ້າດ້ວຍສີໜ້າເປັນຫ່ວງ.

"ແມ່ປ້າຄົນນັ້ນຍັງສັ່ງຢູ່ຫວ໊ະ?" ນາຍບ້ານຖາມດ້ວຍຄວາມຢາກຮູ້.

"ຍັງສັ່ງຢູ່ ແຕ່ກຸ່ມເຮົາຊິບໍ່ມີວັດຖຸດິບມາຜະລິດໃຫ້ລາວຫັ້ນຕີ" ຄຳປານເວົ້າດ້ວຍໃບໜ້າໂສກເສົ້າ.

"ແນວໃດກໍຕາມ ບ້ານເຮົາບໍ່ມີກໍຕ້ອງຫາຊື້ນຳບ້ານອື່ນ" ນາຍບ້ານເວົ້າດ້ວຍນ້ຳສຽງໜັກແໜ້ນ.

"ແລ້ວເຮົາຊິເຮັດແນວໃດກັບຊາວບ້ານພວກນັ້ນ?"

"ເອີ! ມື້ອື່ນນີ້ ຊິເອີ້ນພວກເຂົາເຈົ້າມາເວົ້າກັນ"

ອາລຸນວັນໃໝ່ ແສງຕາເວັນຄ່ອຍໆພົ້ນຈາກຈອມພູ ສ່ອງປະກາຍສູ່ບ້ານແຫ່ງນີ້.

ແກ່ງໆໆໆ... ສຽງກະແລ່ງດັງຂຶ້ນ ເປັນສັນຍານເຕືອນບອກໃຫ້ປະຊາຊົນມາເຕົ້າໂຮມກັນ.

"ທີ່ເອີ້ນພໍ່ແມ່ພີ່ນ້ອງມາເທື່ອນີ້ ກໍເພື່ອປຶກສາຫາລືເລື່ອງການຕັດຫວາຍຂອງພວກເຮົານີ້ແຫຼະ ຖ້າເປັນໄປໄດ້ ຢາກໃຫ້ພວກເຮົາຢຸດເຊົາ" ນາຍບ້ານກ່າວດ້ວຍທ່າທາງເຄັ່ງຂຶມ.

"ເປັນໄປບໍ່ໄດ້ ນາຍບ້ານເອີຍ" ຊາວບ້ານຄົນໜຶ່ງເວົ້າສອດຂຶ້ນ.

"ແຕ່ການທີ່ພໍ່ແມ່ພີ່ນ້ອງທຳລາຍເຄືອຫວາຍແບບນັ້ນ ເຮັດໃຫ້ກຸ່ມພວກເຮົາຂາດວັດຖຸດິບໃນການຜະລິດໄດ໋" ຄຳປານອະທິບາຍເຫດຜົນ.

"ກໍແລ້ວແຕ່ພວກເຈົ້າຕີ້ ຜູ້ໄດ້ເງິນແມ່ນພວກເຈົ້າພຸ້ນນ່າ" ລຸງຄົນໜຶ່ງເວົ້າຂຶ້ນ.

"ແມ່ນໆ...ຖ້າບໍ່ເຮັດແບບນີ້ ພວກເຮົາຊິເອົາເງິນຢູ່ໃສມາໃຊ້ຈ່າຍ" ຊາວບ້ານສ່ວນຫຼາຍຕ່າງເວົ້າເປັນສຽງດຽວກັນແລະຟົດສະນັ່ນຂຶ້ນແບບບໍ່ມີໃຜຟັງໃຜ. ໃນທີ່ສຸດ ກອງປະຊຸມໃນມື້ນັ້ນກໍລົ້ມເລີກໄປໂດຍບໍ່ໄດ້ຮັບຜົນແຕ່ຢ່າງໃດເລີຍ.

ຈາກວັນກາຍເປັນເດືອນ ກຸ່ມຫັດຖະກຳດັ່ງກ່າວກໍຍິ່ງປະສົບບັນຫາເລື່ອງວັດຖຸດິບ ກໍຄືຕະຫຼາດໃນການຈຳໜ່າຍ. ນາຍບ້ານແລະຄຳປານຕ່າງກໍພ້ອມກັນຊອກຫາທາງອອກ ຈົນວັນໜຶ່ງນາຍບ້ານຕັດສິນໃຈເດີນທາງເຂົ້າເມືອງ ເພື່ອສອບຖາມດ້ານຕະຫຼາດດ້ວຍຕົນເອງ ແລະແລ້ວລາວກໍໄດ້ພົບກັບພໍ່ຄ້າກຸ່ມໜຶ່ງ ຈາກການແນະນຳຂອງປ້າທີ່ເປັນຂາປະຈຳຊື້ສິນຄ້າຈາກບ້ານຂອງລາວ.

"ນີ້ຄືນາຍບ້ານສາມັກຄີໄຊ ທີ່ຜະລິດເຄື່ອງຫວາຍສົ່ງໃຫ້ຂ້ອຍເປັນປະຈຳ" ປ້າຄົນນັ້ນບອກກຸ່ມພໍ່ຄ້າ.

"ພໍດີແລ້ວ ພວກເຮົາກຳລັງຕ້ອງການສັ່ງຊື້ຜະລິດຕະພັນຫວາຍຢູ່ພໍດີ. ເຈົ້າຜະລິດສົ່ງໃຫ້ພວກເຮົາໄດ້ບໍ່?" ໜຶ່ງໃນຈຳນວນພໍ່ຄ້າເວົ້າດ້ວຍຄວາມດີໃຈ.

"ໄດ້ຢູ່ ຖ້າເອົາຫຼາຍຕ້ອງໃຫ້ເວລາພວກເຮົາແດ່" ນາຍບ້ານເວົ້າ.

"ພວກເຮົາຕ້ອງການຫຼາຍໃດ໋ ມີຕັ່ງຫວາຍ ພາເຂົ້າ ແອບເຂົ້າກະຢັງ ອັນລະຮ້ອຍພັນໃດ໋" ພໍ່ຄ້າອີກຄົນໜຶ່ງເວົ້າຢ່າງຈິງຈັງ.

ພໍແຕ່ກັບມາເຖິງບ້ານ ນາຍບ້ານກໍໄດ້ເອີ້ນຄຳປານແລະຊາວບ້ານຄົນອື່ນໆມາປຶກສາ.

"ຂ້ອຍໄດ້ໄປພົບລູກຄ້າຢູ່ໃນເມືອງມາ. ເຂົາເຈົ້າຕ້ອງການສິນຄ້າຂອງພວກເຮົາເປັນຈຳນວນຫຼວງຫຼາຍເພື່ອສົ່ງອອກ" ນາຍບ້ານຢຸດຢູ່ຄາວໜຶ່ງແລ້ວເວົ້າຕໍ່ "ພໍ່ແມ່ພີ່ນ້ອງ ດຽວນີ້ທາງກຸ່ມພວກເຮົາໄດ້ຕົກລົງກັນ ຈະຂະຫຍາຍໃຫ້ເປັນກຸ່ມຫັດຖະກຳຂັ້ນບ້ານ ໂດຍໃຫ້ພໍ່ແມ່ພີ່ນ້ອງພວກເຮົາເຂົ້າຮ່ວມໝົດທຸກຄົນ"

"ເອີ້! ຄັນໄດ້ເຂົ້າຮ່ວມໝົດທຸກຄົນກະດີລະຕີ້" ລຸງຄຳສີເວົ້າດອດຂຶ້ນ.

"ແຕ່ພວກເຮົາຕ້ອງມີວິທີໃນການອະນຸລັກແລະນຳໃຊ້ຫວາຍແບບຍືນຍົງໃດ໋. ຖ້າບໍ່ດັ່ງນັ້ນ ພວກເຮົາຈະບໍ່ມີວັດຖຸດິບເພື່ອທຳການຜະລິດ" ນາຍບ້ານເວົ້າເສີມ.

"ພວກເຮົາຕ້ອງວາງມາດຕະການໃຫ້ເຄັ່ງຄັດຕໍ່ຜູ້ລະເມີດ" ຄຳປານຍົກມືຂຶ້ນເວົ້າ.

"ແມ່ນໆ!" ຊາວບ້ານຕ່າງກໍເວົ້າຂຶ້ນເປັນສຽງດຽວກັນ.

"ສະນັ້ນ ພວກເຮົາມາວາງມາດຕະການນຳກັນເນາະ ເຫັນດີບໍ່?" ນາຍບ້ານສະເໜີຄວາມຄິດ.

"ເຫັນດີ!" ຊາວບ້ານເວົ້າເປັນເອກະພາບກັນ.

"ຄຳປານເປັນຜູ້ຈັດເດີ້ ໃຜມີອັນໃດກໍສະເໜີລາວໄດ້ເລີຍ" ນາຍບ້ານໃຫ້ທິດທາງແກ່ຊາວບ້ານ.

ໜຶ່ງຊົ່ວໂມງຜ່ານໄປ ນາຍບ້ານກໍຄືກຸ່ມຫັດຖະກຳ ແລະຊາວບ້ານກໍໄດ້ຂໍ້ສະຫຼຸບເປັນເອກະພາບກັນຄື: ອະນຸລັກປ່າຫວາຍແບບຍືນຍົງ ແລະປະຕິບັດລະບຽບຕໍ່ຜູ້ກະທຳຜິດ ຊຶ່ງມີຂໍ້ກຳນົດດັ່ງນີ້:

1. ປ່າຫວາຍທຸກເຂດຂອງບ້ານຈະຕ້ອງໄດ້ຮັບການອະນຸລັກ.

2. ຫ້າມປະຊາຊົນຫຼືບຸກຄົນບຸກເບີກປ່າຫວາຍ ເພື່ອທຳການຜະລິດຢ່າງເດັດຂາດ.

3. ຫ້າມຕັດເຄືອຫວາຍ ເພື່ອເກັບໝາກຢ່າງເດັດຂາດ. ຖ້າຜູ້ໃດລະເມີດ ຈະຖືກປັບໄໝຢ່າງຕ່ຳ 500.000 ກີບຂຶ້ນໄປ. ຖ້າແມ່ນບຸກຄົນທີ່ສັງກັດຢູ່ໃນກຸ່ມ ຈະຖືກວິໄນໃຫ້ອອກຈາກກຸ່ມທັນທີ.

4. ປະຊາຊົນທຸກຄົນຕ້ອງເປັນເຈົ້າການໃນການປູກແລະຟື້ນຟູປ່າຫວາຍ.

ສາມປີຜ່ານໄປ ກຸ່ມຫັດຖະກຳຂັ້ນບ້ານໄດ້ຮັບການສ້າງຕັ້ງແລະພັດທະນາຂຶ້ນເປັນລຳດັບ ປະຊາຊົນທຸກຄົນພ້ອມຈິດພ້ອມໃຈກັນເຂົ້າຮ່ວມກຸ່ມ. ຊາວໜຸ່ມທຸກຄົນໄດ້ຮັບການສິດສອນດ້ານສີມືການຜະລິດຈາກຄຳປານ ເຮັດໃຫ້ຜະລິດຕະພັນຫວາຍຂອງກຸ່ມບ້ານສາມັກຄີໄຊ ກາຍເປັນທີ່ຮູ້ຈັກຂອງທຸກຄົນໃນສັງຄົມຢ່າງທົ່ວເຖິງ.



# ຂອງເດີມ

*ທ. ຕູ໋ ຊາປໍເນຍ, ມ.ສ ຫ້ວນຈໍ້ງາ, ແຂວງອຸດົມໄຊ*

ດວງຕາເວັນພົ້ນຂອບຟ້າ ສົ່ງແສງອອກໄປທົ່ວພູຜາ ນໍາຄວາມອົບອຸ່ນອອກມາສູ່ບ້ານຫ້ວຍແກ້ວ ຊຶ່ງເປັນເຂດຊົນນະບົດແຫ່ງໜຶ່ງ. ສຽງນົກນ້ອຍຮ້ອງ ຈິ໊ບ! ຈິ໊ບ! ຢູ່ໃນຮັງເທິງກົກໄມ້ ສ່ວນພໍ່ແມ່ຂອງພວກມັນອອກບິນເປັນຝູງ ເພື່ອໄປຊອກຫາອາຫານສໍາລັບວັນໃໝ່. ສຽງໄກ່ຂັນປຸກໃຫ້ປະຊາຊົນຕື່ນອອກຈາກບ່ອນນອນແຕ່ເຊົ້າ. ສຽງຕໍາເຂົ້າ ເຕິ໊ງ! ເຕິ໊ງ! ດັງກ້ອງແລະສັ່ນສະເທືອນໄປທົ່ວທຸກຈອກທຸກແຈຂອງບ້ານ. ຊາວບ້ານຈໍານວນໜຶ່ງພາກັນຍ່າງອອກຈາກບ້ານ ເຂົ້າໄປໃນປ່າດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສ.

ຊາວບ້ານຫ້ວຍແກ້ວມີປະເພນີການໃຊ້ຄົກຕໍາເຂົ້າມາຕັ້ງແຕ່ປູ່ຍ່າຕາຍາຍ. ມື້ນີ້ກໍເໝືອນມື້ຜ່ານມາ ທ້າວເພັດສະໝອນ ເດັກຊາຍອາຍຸເກົ້າປີຊ່ວຍພໍ່ຕໍາເຂົ້າ. ເຂົາຕໍາເຂົ້າທັງຮ້ອງເພງໄປນໍາດ້ວຍໃບໜ້າຍິ້ມແຍ້ມແຈ່ມໃສ.

"ພໍ່...ພໍ່ ລູກຢາກເຂົ້າໂຮງຮຽນ... ພໍ່ສົ່ງລູກໄປຮຽນເທາະ. ລຸງບອກວ່າການສຶກສາເຮັດໃຫ້ເຮົາມີຄວາມຮູ້ ແລະພາໃຫ້ເຮົາຫຼຸດພົ້ນອອກຈາກຄວາມທຸກຍາກໄດ້. ພໍ່ສົ່ງລູກໄປຮຽນນໍາເພິ່ນຢູ່ໃນເມືອງເດີ້"

"ດີແລ້ວທີ່ລູກຄິດແນວນີ້ ພໍ່ຈະສົ່ງລູກໄປຢູ່ນໍາພີ່ນ້ອງຂອງເຮົາຢູ່ໃນເມືອງພຸ້ນ. ແຕ່ລູກຕ້ອງຕັ້ງໃຈສຶກສາຮໍ່າຮຽນເດີ້" ພໍ່ຕອບແຕ່ຢາກໄດ້ຄວາມໝັ້ນໃຈຈາກລູກຊາຍ.

"ໂດຍພໍ່...ລູກສັນຍາວ່າລູກຈະຕັ້ງໃຈສຶກສາຮໍ່າຮຽນ" ລູກຊາຍຮັບປາກຮັບຄໍານໍາພໍ່.

ຫຼັງຈາກນັ້ນ ເພັດສະໝອນໄປຮໍ່າຮຽນເອົາຄວາມຮູ້ຢູ່ໃນເມືອງສົມດັ່ງຄວາມຕັ້ງໃຈ. ເມື່ອຮຽນຈົບມັດທະຍົມປາຍແລ້ວ ເຂົາກໍໄດ້ຮຽນຕໍ່ກ່ຽວກັບກົນຈັກທີ່ທັນສະໄໝເປັນເວລາສີ່ປີ ຈົບສໍາເລັດດ້ວຍດີ.

ຕໍ່ມາເພັດສະໝອນໄດ້ສະໝັກເຂົ້າເຮັດວຽກຢູ່ໂຮງງານແຫ່ງໜຶ່ງ ໃນຕໍາແໜ່ງຜູ້ຄວບຄຸມເຄື່ອງຈັກ. ພໍເຮັດວຽກໄດ້ສອງປີ ເຂົາກໍມີເງິນຝາກໄວ້ທະນາຄານຈໍານວນໜຶ່ງ ແລະຕັ້ງໃຈໄວ້ວ່າມື້ໃດມື້ໜຶ່ງ ຕົນເອງຈະຕັ້ງບໍລິສັດ ເປັນຕົວແທນຈໍາໜ່າຍເຄື່ອງກົນຈັກຕ່າງໆ ທີ່ກ່ຽວຂ້ອງກັບການປູກຝັງ ແລະການຜະລິດກະສິກໍາ. ເມື່ອໄດ້ຮັບອະນຸຍາດໃຫ້ພັກປະຈໍາປີເປັນເວລາສອງອາທິດ ເພັດສະໝອນກໍຫາໂອກາດກັບຄືນມາຢາມພໍ່ແມ່ຢູ່ທີ່ບ້ານເກີດ ເພາະນັບຕັ້ງແຕ່ຈາກບ້ານໄປ ກໍບໍ່ໄດ້ກັບບ້ານຈັກເທື່ອເລີຍ.

ຕາມເສັ້ນທາງໃກ້ຈະຮອດບ້ານ ສຽງຄົກຕໍາເຂົ້າ ເຕິ້ງ! ເຕິ້ງ! ກໍດັງກ້ອງມາເຂົ້າຫູ ເຮັດໃຫ້ເພັດສະໝອນຄິດເຫັນພາບບັນຍາກາດເກົ່າໆ ເມື່ອເຂົາຍ່າງອອກຈາກບ້ານນີ້ໄປ. ເຂົາຄິດໃນໃຈດຽວນີ້ບ້ານເມືອງພັດທະນາໄປຫຼາຍແລ້ວ ແຕ່ເປັນຫຍັງຊາວບ້ານນີ້ຍັງດໍາລົງຊີວິດຢູ່ແບບເກົ່າ ບໍ່ຍອມປ່ຽນແປງໄປຕາມໂລກ. ເປັນຫຍັງເຂົາເຈົ້າຍັງພາກັນໃຊ້ຄົກຕໍາເຂົ້າແບບເກົ່າຢູ່ ເສຍທັງເຫື່ອແຮງ ເສຍທັງເວລາ.

ເພັດສະໝອນເປັນບ່າວອ້ອນທ້ອນ ພໍ່ແມ່ເກືອບຈື່ບໍ່ໄດ້ຊໍ້າວ່າເປັນລູກຊາຍຂອງພວກຕົນ.

"ລູກເອີ້ຍ! ແມ່ດີໃຈຫຼາຍທີ່ເຫັນລູກກັບມາ" ແມ່ທັງເວົ້າ ທັງເອົາມືໂອບກອດລູກຊາຍ.

"ພໍ່ກໍດີໃຈທີ່ລູກຮຽນຈົບ... ແລະມີວຽກເຮັດງານທໍາ" ພໍ່ທີ່

# ຂໍໂທດຫຼາຍໆ



ປື້ມຫົວດັ່ງກ່າວ ຍັງບໍ່ສາມາດນຳ
ມາເຜີຍແຜ່ໄດ້ ເນື່ອງຈາກຍັງບໍ່
ໄດ້ຮັບການອະນຸຍາດໃຫ້ເຜີຍແຜ່
ໄດ້ຢ່າງເປັນທາງການເທື່ອ...

ດ້ວຍຄວາມຮັກແພງ